LAO ASEAN LEASING PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

ເລກທີ. 03/ລອຊ/2020

ນະຄອນຫຼວງວຽງຈັນ, ວັນທີ: 28 ພຶດສະພາ 2020

ຮຽນ: ທ່ານ ເລຂາທິການ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ

ເລື່ອງ: ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເປັນກຽດຂໍແຈ້ງມະຕິຂອງກອງປະຊຸມຂອງກອງປະຊຸມສາມັນຜູ້ຮຸ້ນໃນວັນທີ 28 ພຶດສະພາ 2020 ເວລາ 2 ໂມງແລງ (ເລີ່ມລົງທະບຽນເວລາ 1:30 ໂມງແລງ) ທີ່ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 2,ຕຶກ NNN,ຖະໜົນ ບຸລີຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດ 26 ທ່ານ, ແບ່ງເປັນຜູ້ຖືຮຸ້ນເຂົ້າຮ່ວມດ້ວຍໂຕເອງ ຈຳນວນ 24 ທ່ານ ແລະ ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 2 ທ່ານ ຖືຮຸ້ນລວມທັງໝົດ 297,882,100 ຮຸ້ນ ຫຼື 99% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມມີມະຕິດັ່ງນີ້:

ວາລະທີ 1 ພິຈາລະນາຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນງານຂອງບໍລິສັດແລະບົດລາຍງານປະຈຳປີ 2019.

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

• ເຫັນດີ	297.882.100	ສຽງ ຫຼື ເທົ່າກັບ 100%
• ບໍ່ເຫັນດີ	0	ສຽງ ຫຼື ເທົ່າກັບ 0%
• ລວມ	297.882.100	ສຽງ ຫຼື ເທົ່າກັບ 100%

ວາລະທີ 2 ພິຈາລະນາຮັບຮອງເອົາແລະອະນຸມັດ ສຳລັບເອກະສານລາຍງານການເງິນຂອງບໍລິສັດ ສຳ ລັບປີ 2019.

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

• ເຫັນດີ	297.882.100	ສຽງ ຫຼື ເທົ່າກັບ 100%
• ບໍ່ເຫັນດີ	0	ສຽງ ຫຼື ເທົ່າກັບ 0%
• ລວມ	297.882.100	ສຽງ ຫຼື ເທົ່າກັບ 100%

ວາລະທີ 3 **ພິຈາລະນາຮັບຮອງເອົາແລະອະນຸມັດການຂະຫຍາຍທຸລະກິດຕາມແຜນທຸລະກິດຂອງບໍລິສັດ ສຳ ລັບປີ 2020.**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297.882.100 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297.882.100 ສຽງ ຫຼື ເທົ່າກັບ 100%

ວາລະທີ 4 **ພິຈາລະນາແລະອະນຸມັດການຈັດສັນ ກຳໄລສຸດທິ ສຳລັບປີ 2019 ແລະວິທີການຈ່າຍເງິນປັນຜົນ**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 4.600 ສຽງ ຫຼື ເທົ່າກັບ 0%
- ບໍ່ເຫັນດີ 297.887.500 ສຽງ ຫຼື ເທົ່າກັບ 100%
- ລວມ 297.882.100 ສຽງ ຫຼື ເທົ່າກັບ 100%

ວາລະທີ 5 **ພິຈາລະນາຮັບຮອງເອົາ ແລະ ອະນຸມັດ ສຳລັບແຜນການຈັດຕັ້ງປະຕິບັດມາດຕະຖານການລາຍງານການເງິນສາກົນທີ່ ລອຊ ຮອດປີ 2020**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297.882.100 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297.882.100 ສຽງ ຫຼື ເທົ່າກັບ 100%

ວາລະທີ 6 **ພິຈາລະນາ ແລະ ຮັບຮອງເອົາ ແລະ ເຫັນດີ ການແຕ່ງຕັ້ງສະມາຊິກຄະນະກຳມະການໃໝ່, ການປ່ຽນຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານຂອງບໍລິສັດ**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297.882.100 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297.882.100 ສຽງ ຫຼື ເທົ່າກັບ 100%

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ພິທີກອນ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 3:00 ລແງ

ດ້ວຍຄວາມນັບຖືຢ່າງສູງ
ປະທານສະມາຊິກສະພາບໍລິຫານ

ທ່ານນາງ ຢູກິ ສະກ້ອດ